**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ຄະນະກຳມະການປົກຄອງແຂວງ** **ເລກທີ...02...../ປຄປຂ**

**ອັດຕະປື, ວັນທີ 13 ມີນາ 2026**

# ຄຳສັ່ງ

# ວ່າດ້ວຍ ການເພີ່ມທະວີຄວາມເອົາໃຈໃສ່ຕໍ່ວຽກງານທະບຽນສານ

**ເຖິງ:** ບັນດາທ່ານຫົວໜ້າພະແນກການ, ຫົວໜ້າອົງການທຽບເທົ່າ ອ້ອມຂ້າງແຂວງ, ຫົວໜ້າກອງບັນຊາການ ປກຊ ແຂວງ, ຫົວໜ້າກອງບັນຊາການ ປກສ ແຂວງ, ສາຂາທະນາຄານທຸລະກິດ ທັງພາກລັດ ແລະ ເອກະຊົນ, ປະທານ ຄະນະກຳມະການປົກຄອງເມືອງ 5 ຕົວເມືອງ, ສະຖາບັນການເງິນຈຸລະພາກ, ບໍລິສັດ, ຫ້າງຮ້ານ, ນັກທຸລະກິດ ແລະ ພໍ່ແມ່ປະຊາຊົນ ໃນທົ່ວແຂວງ;

- ອີງຕາມ ມາດຕາ 20, ຂໍ້ທີ 16 ຂອງກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ 78/ສພຊ, ວັນທີ 20 ມີນາ 2025;
- ອີງຕາມ ກົດໝາຍວ່າດ້ວຍ ທະບຽນສານ ສະບັບເລກທີ 24/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ປະມວນກົດໝາຍແພ່ງ ເລກທີ 55 /ສພຊ, ນະຄອນຫຼວງວຽງຈັນ, ວັນທີ 6 ທັນວາ 2018;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 10 /ນຍ, ລົງວັນທີ 01 ເມສາ 2016 ວ່າດ້ວຍການເພີ່ມທະວີຄວາມເອົາໃຈໃສ່ຕໍ່ວຽກງານທະບຽນສານ;
- ອີງຕາມ ໜັງສືສະເໜີ ຂອງພະແນກຍຸຕິທຳແຂວງ ສະບັບເລກທີ 67/ພຍຂ, ລົງວັນທີ 12 ກຸມພາ 2026;

ວຽກງານທະບຽນສານ ເປັນວຽກງານໜຶ່ງ ທີ່ມີບົດບາດສຳຄັນຂອງຂະແໜງຍຸຕິທຳ ໃນການຢັ້ງຢືນຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ກົດໝາຍ ຂອງສັນຍາ, ເອກະສານ ຫຼື ຕາມການກຳນົດຂອງກົດໝາຍ, ຕາມຄວາມສະໝັກໃຈຂອງຄູ່ສັນຍາ ຫຼື ຜູ້ຂໍຢັ້ງຢືນ, ແນໃສ່ເພີ່ມທະວີນິຕິທຳ, ປົກປ້ອງ ສິດ ແລະ ຜົນປະໂຫຍດ ອັນຊອບທຳ ຂອງບຸກຄົນ ນິຕິບຸກຄົນ ແລະ ການຈັດຕັ້ງ, ປະກອບສ່ວນເຂົ້າໃນການປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ ແລະ ການພັດທະນາເສດຖະກິດ ສັງຄົມ ຂອງແຂວງ;

ຜ່ານການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ທະບຽນສານ ເຫັນວ່າຄວາມຮັບຮູ້ ແລະ ເຂົ້າໃຈ ຂອງສັງຄົມ ເຖິງຄວາມໝາຍ ຄວາມສຳຄັນ, ຜົນປະໂຫຍດ ທີ່ຈະໄດ້ຮັບຈາກການຢັ້ງຢືນ ໂດຍຂະແໜງທະບຽນສານ ແລະ ໜ່ວຍງານທະບຽນສານເມືອງ ຍັງບໍ່ທັນກວ້າງຂວາງ, ຫຼາຍພາກສ່ວນຍັງຖືເບົາ ພາໃຫ້ເກີດມີຫຼາຍສັນຍາ ຫຼື ຫຼາຍເອກະສານ ບໍ່ຖືກຕ້ອງ ຈຶ່ງເປັນສາເຫດໜຶ່ງ ທີ່ພາໃຫ້ເກີດມີຂໍ້ຂັດແຍ່ງ, ສ້າງຄວາມສັບສົນ ໃຫ້ແກ່ການຈັດຕັ້ງພັກ ລັດ ເຮັດໃຫ້ສັງຄົມ

ບໍ່ມີຄວາມສະຫງົບ, ເນື່ອງມາຈາກສັນຍາ ແລະ ເອກະສານນັ້ນບໍ່ຖືກຕ້ອງ ຕາມກົດໝາຍ ແລະ ຄວາມເປັນຈິງ ເປັນຕົ້ນ ພິໄນກຳ, ລາຍເຊັນ, ລາຍໂປ້ມື, ເອກະສານສຳເນົາ ແລະ ອື່ນໆ;

ເພື່ອສ້າງຄວາມຮັບຮູ້, ເຂົ້າໃຈ ຂອງສັງຄົມ, ກ່ຽວກັບ ວຽກງານທະບຽນສານ ແລະ ເຮັດໃຫ້ກົດໝາຍວ່າດ້ວຍທະບຽນສານ ໄດ້ຮັບການປະຕິບັດຢ່າງເປັນເອກະພາບ, ໃນຂອບເຂດແຂວງອັດຕະປື, ທັງເປັນການຍົກສູງຄຸນນະພາບໃນການຢັ້ງຢືນສັນຍາ ຫຼື ເອກະສານອື່ນ ໃຫ້ມີຄຸນຄ່າທາງດ້ານກົດໝາຍ, ເປັນຫຼັກຖານໃຫ້ແກ່ການພິຈາລະນາຄະດີຂອງສານ, ຮັບປະກັນປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປະກອບສ່ວນສຳຄັນເຂົ້າໃນການສ້າງຄວາມຍຸຕິທຳ ແລະ ສີວິໄລຂອງສັງຄົມ;

## ປະທານຄະນະກຳມະການປົກຄອງແຂວງ ອອກຄຳສັ່ງ:

1. ໃຫ້ບັນດາພະແນກການ, ອົງການລັດທຽບເທົ່າຂັ້ນແຂວງ, ອົງການຈັດຕັ້ງສັງຄົມ, ເມືອງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງເພີ່ມທະວີຄວາມເອົາໃຈໃສ່ໃນການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍທະບຽນສານ ແລະ ນິຕິກຳຕ່າງໆ ກ່ຽວກັບ ວຽກງານທະບຽນສານຢ່າງເຂັ້ມງວດ ໂດຍໃຫ້ຖືເອົາການເຄົາລົບ ແລະ ປະຕິບັດກົດໝາຍວ່າດ້ວຍທະບຽນສານ ເປັນຂະບວນການໜຶ່ງທີ່ສຳຄັນ ໃນການສ້າງສັງຄົມ ໃຫ້ເປັນສັງຄົມທີ່ມີຄວາມຍຸຕິທຳ ແລະ ສີວິໄລ ຕາມແນວທາງຂອງພັກ, ປະກອບສ່ວນອັນສຳຄັນ ເຂົ້າໃນພາລະກິດສ້າງສາ ແລະ ພັດທະນາເສດຖະກິດ-ສັງຄົມ ຂອງແຂວງອັດຕະປື;

2. ໃຫ້ບັນດາພະແນກການ, ອົງການລັດທຽບເທົ່າຂັ້ນແຂວງ, ເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ, ເອກະຊົນ ແລະ ພົນລະເມືອງລາວ, ຄົນຕ່າງປະເທດ ຮັບຮູ້ ແລະ ປະຕິບັດຢ່າງເປັນເອກະພາບ ໃນການນຳເອົາສັນຍາ ແລະ ເອກະສານປະເພດຕ່າງໆ ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍທະບຽນສານ (ສະບັບປັບປຸງ) ເລກທີ 24/ສພຊ, ວັນທີ 29 ທັນວາ 2022 ມາຢັ້ງຢືນເຊິ່ງປະກອບມີດັ່ງນີ້:

2.1. ສັນຍາທີ່ຕ້ອງນຳມາຢັ້ງຢືນ ມີດັ່ງນີ້:

- ສັນຍາຊື້ ຂາຍ, ແລກປ່ຽນ, ເຊົ່າຊື້, ມອບ ແລະ ໂອນ ພາຫານະທີ່ມີການຂຶ້ນທະບຽນທຸກປະເພດ;
- ສັນຍາຊື້ ຂາຍ, ແລກປ່ຽນ, ເຊົ່າ, ມອບ ແລະ ໂອນ ອະສັງຫາລິມະຊັບ;(ທີ່ດິນ, ເຮືອນ)
- ສັນຍາກູ້ຢືມ ທີ່ມີການຄ້ຳປະກັນດ້ວຍອະສັງຫາລິມະຊັບ ຫຼື ພາຫານະທີ່ມີການຂຶ້ນທະບຽນ;
- ສັນຍາ ແລະ ນິຕິກຳທີ່ມີການປ່ຽນແປງສິດນຳໃຊ້ທີ່ດິນ ແລະ ການເຄື່ອນໄຫວ ສິດນຳໃຊ້ທີ່ດິນເຊັ່ນ: ການສືບທອດມູນມໍລະດົກຕາມກົດໝາຍ ແລະ ການສືບທອດມູນມໍລະດົກຕາມພິໄນກຳ, ສັນຍາຂາຍຝາກ, ສັນຍາແລກປ່ຽນ;
- ສັນຍາຊື້ ຂາຍ, ສັນຍາຮຸ້ນສ່ວນ, ສັນຍາແຮງງານ, ສັນຍາມອບ, ໂອນ ຮຸ້ນ ຫຼື ກິດຈະການທຸກປະເພດ;
- ສັນຍາສຳປະທານ ລະຫວ່າງນິຕິບຸກຄົນ ກັບ ພາກລັດ, ສັນຍາເຊົ່າລະຫວ່າງບຸກຄົນ ກັບ ນິຕິບຸກຄົນ
- ສັນຍາຮັບເໝົາກໍ່ສ້າງ-ສ້ອມແປງໂຄ່ງຮ່າງພື້ນຖານ ທີ່ກ່ຽວຂ້ອງກັບການລົງທຶນຂອງລັດ;
- ສັນຍາກູ້ຢືມ ແລະ ສັນຍາຄ້ຳປະກັນເງິນກູ້ ຂອງທະນາຄານ ແລະ ສະຖາບັນການເງິນຈຸລະພາກ ທີ່ມີການຄ້ຳປະກັນດ້ວຍອະສັງຫາລິມະຊັບ ຫຼື ອະສັງຫາລິມະຊັບ ແລະ ບັນຊີເງິນຝາກ ທຸກຄັ້ງ ຕ້ອງມາຢັ້ງຢືນທະບຽນສານ;

- ນອກຈາກສັນຍາທີ່ກ່າວມາຂ້າງເທິງນີ້ແລ້ວ ສັນຍາອື່ນກໍສາມາດນໍາມາຢັ້ງຢືນທະບຽນສານໄດ້;

2.2. ເອກະສານທີ່ຕ້ອງ ນໍາມາຢັ້ງຢືນ ມີດັ່ງນີ້:

- ການແປພາສາ;
- ພີໄນກໍາ;
- ກໍາມະສິດ ກ່ຽວກັບຊັບເດີມ ແລະ ສິນສົມສ້າງ ຫຼື ຊັບຮ່ວມ;
- ເອກະສານສະບັບສໍາເນົາຖ່າຍ; (ສະບັບກອບປີ)
- ລາຍເຊັນ ຫຼື ລາຍໂປ້ມື;
- ຮູບຖ່າຍທຽບກັບຕົວບຸກຄົນ;
- ເວລາ ແລະ ສະຖານທີ່ຍື່ນເອກະສານ;
- ເອກະສານອື່ນໆ;

ຈະຖືວ່າເປັນສັນຍາ ຫຼື ເອກະສານທີ່ຖືກຕ້ອງ, ສອດຄ່ອງ ແລະ ມີຄຸນຄ່າທາງດ້ານກົດໝາຍນັ້ນ, ຕ້ອງໄດ້ຮັບການຢັ້ງຢືນຄວາມຖືກຕ້ອງ, ຈາກອົງການທະບຽນສານເທົ່ານັ້ນ, ໃນກໍລະນີສັນຍາ ຫຼື ເອກະສານທີ່ຍັງບໍ່ໄດ້ຮັບການຢັ້ງຢືນ ຈາກອົງການທະບຽນສານນັ້ນ, ໃຫ້ອົງການຈັດຕັ້ງລັດ ທີ່ກ່ຽວຂ້ອງແນະນໍາບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນໍາໄປຢັ້ງຢືນຄວາມຖືກຕ້ອງ ຈາກອົງການທະບຽນສານທີ່ມີສິດອໍານາດກ່ອນ;

3. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ນໍາເອົາສັນຍາ ຫຼື ເອກະສານຕ່າງໆ ມາຢັ້ງຢືນຄວາມຖືກຕ້ອງ ທາງດ້ານກົດໝາຍຈາກອົງການທະບຽນສານນັ້ນ, ຕ້ອງຈ່າຍຄ່າທໍານຽມ ແລະ ຄ່າບໍລິການ ຕາມກົດໝາຍວ່າດ້ວຍທະບຽນສານ ແລະ ລັດຖະບັນຍັດຂອງປະທານປະເທດ ທີ່ປະກາດໃຊ້ໃນແຕ່ລະໄລຍະ;

4. ພະແນກຍຸຕິທໍາ ແຂວງ ກໍຄືຫ້ອງການຍຸຕິທໍາເມືອງ ຕ້ອງເພີ່ມທະວີຄວາມເອົາໃຈໃສ່ ປະສານສົມທົບ ແລະ ຊຸກຍູ້ບັນດາພະແນກການ, ອົງການທຽບເທົ່າ, ອົງການຈັດຕັ້ງມະຫາຊົນ, ຫ້ອງການອ້ອມຂ້າງເມືອງ ໃນການຈັດຕັ້ງປະຕິບັດ ແລະ ໂຄສະນາກົດໝາຍວ່າດ້ວຍທະບຽນສານ ແລະ ບັນດານິຕິກໍາ ກ່ຽວກັບວຽກງານທະບຽນສານ ໃຫ້ກວ້າງຂວາງ ແລະ ເລິກເຊິ່ງ ເພື່ອໃຫ້ບັນດາຂະແໜງການ, ອົງການ ແລະ ພົນລະເມືອງທຸກຄົນ ຮັບຮູ້ ແລະ ເຂົ້າໃຈ ເຖິງຄວາມໝາຍ, ຄວາມສໍາຄັນ ແລະ ຜົນປະໂຫຍດທີ່ຈະໄດ້ຮັບ ຈາກການຢັ້ງຢືນຄວາມຖືກຕ້ອງ ຂອງບັນດາສັນຍາ ແລະ ເອກະສານຕ່າງໆ ໂດຍອົງການທະບຽນສານ;

5. ໃຫ້ຄະນະກໍາມະການປົກຄອງແຂວງ, ຄະນະກໍາມະການປົກຄອງເມືອງ ເອົາໃຈໃສ່ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານທະບຽນສານ ໃນຂັ້ນຂອງຕົນ ປັບປຸງ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງທາງດ້ານການເມືອງ, ແນວຄິດ, ການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ແນໃສ່ຮັບປະກັນ ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍທະບຽນສານ;

6. ໃຫ້ຄະນະພັກ, ຄະນະກໍາມະການປົກຄອງແຂວງ, ຄະນະກໍາມະການປົກຄອງເມືອງ ເພີ່ມທະວີຄວາມເອົາໃຈໃສ່ໃກ້ຊິດຕິດແທດ ແລະ ສ້າງເງື່ອນໄຂອໍານວຍຄວາມສະດວກດ້ານຕ່າງໆ ເປັນຕົ້ນງົບປະມານ, ສະຖານທີ່ເຮັດວຽກ, ພາຫະນະ ແລະ ອຸປະກອນຮັບໃຊ້ທີ່ຈໍາເປັນ ໃຫ້ອົງການດັ່ງກ່າວ ສາມາດປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຢ່າງເຕັມສ່ວນ ແນໃສ່ຮັບປະກັນບໍລິການສັງຄົມ ດ້ວຍຄວາມວ່ອງໄວ, ຖືກຕ້ອງ ແລະ ມີປະສິດທິຜົນສູງ, ປະກອບສ່ວນໃນການພັດທະນາເສດຖະກິດ ສັງຄົມຂອງແຂວງ, ພ້ອມກັນນັ້ນ ກໍໃຫ້ເອົາໃຈໃສ່ຄຸ້ມຄອງເງິນລາຍຮັບ

ຈາກຄ່າທຳນຽມ ແລະ ຄ່າບໍລິການໃນການຢັ້ງຢືນສັນຍາ ແລະ ເອກະສານຕ່າງໆ ໃຫ້ຖືກຕ້ອງ, ສອດຄ່ອງ ຕາມລັດຖະບັນຍັດຂອງປະທານປະເທດທີ່ປະກາດໃຊ້ແຕ່ລະໄລຍະ ແລະ ລະບຽບການເງິນ, ງົບປະມານ;

7. ໃຫ້ພະແນກຍຸຕິທຳແຂວງ ເພີ່ມທະວີຄວາມເອົາໃຈໃສ່ໃນການຂຶ້ນແຜນ ສະເໜີກໍ່ສ້າງ, ບຳລຸງ ແລະ ຍົກລະດັບວິຊາສະເພາະ ໃຫ້ພະນັກງານທະບຽນສານຂັ້ນຕ່າງໆ ດ້ວຍຫຼາຍຮູບການເປັນຕົ້ນ ການຝຶກອົບຮົມໄລຍະສັ້ນ, ໄລຍະຍາວ ໃຫ້ເປັນລະບົບຕໍ່ເນື່ອງ ເພື່ອໃຫ້ໄດ້ຜູ້ຊຳນານງານ ຫຼື ຊ່ຽວຊານ ໃນວຽກງານດັ່ງກ່າວ ແນ່ໃສ່ຮັບປະກັນຍົກສູງຄຸນນະພາບ ຂອງວຽກງານທະບຽນສານ, ຮັບປະກັນສະໜອງຂໍ້ມູນທີ່ຊັດເຈນ ໃຫ້ແກ່ການດຳເນີນຄະດີ ຂອງຂະບວນການຍຸຕິທຳ ໃຫ້ມີຄວາມວ່ອງໄວ ແລະ ຖືກຕ້ອງ ທັງຮັບປະກັນ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃຫ້ມີຄວາມເຂັ້ມງວດ ແລະ ສັກສິດຫຼາຍຂຶ້ນ;

8. ມອບໃຫ້ພະແນກຍຸຕິທຳແຂວງ ເປັນເສນາທິການໃຫ້ແກ່ຄະນະກຳມະການປົກຄອງແຂວງ ແລະ ເປັນເຈົ້າການປະສານສົມທົບ, ຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ, ພ້ອມທັງສະຫຼຸບ, ສັງລວມ ແລະ ລາຍງານ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ ເພື່ອຊາບ ແລະ ມີທິດຊີ້ນຳ;

9. ບັນດາຫົວໜ້າພະແນກການ, ຫົວໜ້າອົງການລັດທຽບເທົ່າຂັ້ນແຂວງ, ກອງບັນຊາການ ປກຊ, ປກສ ແຂວງ , ຄະນະກຳມະການປົກຄອງເມືອງ, ພາກສ່ວນທີ່ກ່ຽວຂ້ອງ ພົນລະເມືອງຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ;

10. ຄຳສັ່ງສະບັບນີ້ ປ່ຽນແທນ ຄຳແນະນຳ ສະບັບເລກທີ 936/ຈຂອປ, ລົງວັນທີ 14 ກັນຍາ 2016 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານຄະນະກຳມະການປົກຄອງແຂວງ**

**ບ່ອນສົ່ງ:**

1. ຄະນະປະຈຳພັກແຂວງຜົ້ງສາລີ 1 ສະບັບ (ເພື່ອຊາບ);
2. ພະແນກການ, ອົງການລັດທຽບເທົ່າ 1 ສະບັບ (ເພື່ອປະຕິບັດ);
3. ກອງບັນຊາການ ປກຊ, ປກສ ແຂວງ 1 ສະບັບ (ເພື່ອປະຕິບັດ);
4. ປະທານຄະນະກຳມະການປົກຄອງເມືອງ 5 ເມືອງ ໆລະ 1 ສະບັບ (ເພື່ອປະຕິບັດ);
5. ເກັບຮັກສາ 1 ສະບັບ.

ແຂວງຜົ້ງສາລີ
ຄະນະກຳມະການປົກຄອງ

ທະນູໄຊ ບັນຊາລິດ